ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ ........../ສພຊ

ນະຄອນຫລວງວຽງຈັນ, ວັນທີ.............................

# ຮ່າງ ກົດໝາຍ
# ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການແກ້ໄຂຢ່າງສັນຕິວິທີ, ເປັນທຳ ແລະ ວ່ອງໄວ ແນໃສ່ຊຸກຍູ້ການດຳເນີນທຸລະກິດໃຫ້ຂະຫຍາຍຕົວ ແລະ ເຊື່ອມໂຍງເຂົ້າສາກົນ, ສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ຂໍ້ຂັດແຍ່ງ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂໍ້ພິພາດທາງດ້ານຜົນປະໂຫຍດລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ, ບຸກຄົນກັບບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນທຸລະກິດ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ ຊຶ່ງດຳເນີນຢູ່ນອກລະບົບສານປະຊາຊົນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄູ່ກໍລະນີ** ໝາຍເຖິງ ຄູ່ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ ແລະ ຝ່າຍຖືກຮ້ອງຂໍ;

2. **ຜູ້ໄກ່ເກ່ຍ** ໝາຍເຖິງ ຜູ້ທີ່ຖືກເລືອກໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ໃຫ້ເປັນຄົນກາງ ເພື່ອອຳນວຍຄວາມສະດວກ, ຊ່ວຍເຫຼືອ ແລະ ໃຫ້ຄຳປຶກສາ ໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ.

3. **ຜູ້ຕັດສິນ** ໝາຍເຖິງ ຜູ້ທີ່ຖືກເລືອກ ໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ໃຫ້ດຳເນີນການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດໃດໜຶ່ງ.

4. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການມອບສິດ ຈາກຄູ່ກໍລະນີຝ່າຍໃດໜຶ່ງ ເພື່ອໃຫ້ປະຕິບັດໜ້າທີ່ແທນຕົນ ຕາມລະບຽບການ, ກົດໝາຍ;

5. **ຄໍາຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ** ໝາຍເຖິງ ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຕ່າງປະເທດ ຫຼື ສາກົນ ທີ່ດຳເນີນການຕັດສິນຢູ່ ຕ່າງປະເທດ ຫຼື ສປປ ລາວ;

6. **ການຄ້າສາກົນ** ໝາຍເຖິງ ການຊື້-ຂາຍສິນຄ້າ ຫຼື ການບໍລິການ ທີ່ຜ່ານດິນແດນຂອງສອງ ຫຼື ຫຼາຍປະເທດໂດຍບໍ່ຂຶ້ນກັບສັນຊາດຂອງຄູ່ສັນຍາ;

7. **ການລົງທຶນຕ່າງປະເທດ** ໝາຍເຖິງ ການລົງທຶນຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

8. ການດຳເນີນທຸລະກິດ ໝາຍເຖິງ ການຜະລິດ, ການຄ້າ, ການລົງທຶນ, ການບໍລິການ ແລະ ອື່ນໆ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ໃຫ້ດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍສັນຕິວິທີ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດເຄື່ອນໄຫວນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນຕາມກົດໝາຍ ຢ່າງມີປະສິດທິຜົນ.

ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ລັດ ອະນຸຍາດໃຫ້ສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ ຊຶ່ງໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 5 ສິດໃນການເລືອກການແກ້ໄຂຂໍ້ຂັດແຍ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃຕ້ກົດໝາຍສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ່າງປະເທດ ທີ່ດຳເນີນທຸລະກິດ ການຄ້າສາກົນ ຫຼື ການລົງທຶນຕ່າງປະເທດ ຢູ່ ສປປ ລາວ ມີສິດເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ສາກົນ ລວມທັງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ, ກົດໝາຍ, ລະບຽບການດຳເນີນ, ສະຖານທີ່ ແລະ ພາສາ ຕາມການຕົກລົງກັນ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ເກີດຂຶ້ນຈາກການລະເມີດສັນຍາ, ການດຳເນີນທຸລະກິດ ຕາມຄວາມສະໝັກໃຈຂອງຄູ່ກໍລະນີ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ບຸກຄະລາກອນຂອງການຈັດຕັ້ງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງກັບສັນຍາ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ໝວດທີ 1
### ຫຼັກການ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 8 ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ;
2. ຄວາມສະໝັກໃຈຂອງຄູ່ກໍລະນີ;
3. ຄວາມສະເໝີພາບຂອງຄູ່ກໍລະນີ;
4. ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ;
5. ພາສາທີ່ນຳໃຊ້;
6. ການຮັບປະກັນຄວາມລັບ.

**ມາດຕາ 9 ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງຮັບປະກັນຄວາມຍຸຕິທຳ ແລະ ໃຫ້ມີຄວາມສອດຄ່ອງກັບກົດໝາຍ.

**ມາດຕາ 10 ຄວາມສະໝັກໃຈຂອງຄູ່ກໍລະນີ**

ຄູ່ກໍລະນີ ມີສິດນຳເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ສະເໜີຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

**ມາດຕາ 11 ຄວາມສະເໝີພາບຂອງຄູ່ກໍລະນີ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີແຕ່ລະຝ່າຍ ມີສິດສະເໝີພາບຕໍ່ໜ້າກົດໝາຍ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳເນີນທຸລະກິດ ຢູ່ ສປປ ລາວ ມີສິດສະເໝີພາບຄືກັນກັບພົນລະເມືອງລາວ ຖ້າວ່າກົດໝາຍຫາກບໍ່ໄດ້ກຳນົດໄວ້ຢ່າງອື່ນ.

**ມາດຕາ 12 ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສີນ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສີນ ຕ້ອງປະຕິບັດໜ້າທີ່ຂອງຕົນຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທຳ ແລະ ປອດໃສ ພາຍໃຕ້ກົດໝາຍ, ລະບຽບການ, ປາສະຈາກການແຊກແຊງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

**ມາດຕາ 13 ພາສາທີ່ນຳໃຊ້**

ພາສາທີ່ນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ຕ້ອງແມ່ນພາສາລາວ ເວັ້ນເສຍແຕ່ສັນຍາ ຫຼື ຄູ່ກໍລະນີຫາກໄດ້ຕົກລົງກັນໄວ້ຢ່າງອື່ນ, ສ່ວນຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ສາມາດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 14 ການຮັບປະກັນຄວາມລັບ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນຳສະເໜີໃນເວລາໄກ່ເກ່ຍ ຫຼື ຕັດສີນ ຕ້ອງຮັກສາເປັນຄວາມລັບ.

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສີນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບ ຕໍ່ບຸກຄົນອື່ນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.

## ໝວດທີ 2
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 15 ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສອງຮູບການ ດັ່ງນີ້:

1. ການແກ້ໄຂດ້ວຍການໄກ່ເກ່ຍ;
2. ການແກ້ໄຂດ້ວຍການຕັດສີນ.

**ມາດຕາ 16 (ປັບປຸງ) ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ ຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ການລະເມີດສັນຍາ ຊຶ່ງກ່ຽວຂ້ອງກັບການດຳເນີນທຸລະກິດ;
2. ຂໍ້ຂັດແຍ່ງ ກ່ຽວກັບການດຳເນີນທຸລະກິດ;
3. ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ;
4. ຄູ່ກໍລະນີ ໄດ້ສະໝັກໃຈໃຫ້ແກ້ໄຂຂໍ້ຂັດແຍ່ງ;
5. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ສານປະຊາຊົນ ພວມດຳເນີນການແກ້ໄຂຢູ່ ຫຼື ມີຄຳຕັດສີນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
6. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ລະເມີດກົດໝາຍ ກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 17 ການຢື່ນຄໍາຮ້ອງຂໍ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງຍື່ນຄໍາຮ້ອງຂໍ ແລະ ປະກອບເອກະສານຕ່າງໆທີ່ກ່ຽວຂ້ອງຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດບ່ອນທີ່ຄູ່ກໍລະນີ ເຫັນວ່າມີຄວາມສະດວກ ແລະ ເປັນເອກະພາບກັນ. ໃນກໍລະນີ ທີ່ບໍ່ຕົກລົງເຫັນດີນໍາກັນແລ້ວ ກໍໃຫ້ໄປຍື່ນຕໍ່ບ່ອນຂໍ້ຂັດແຍ່ງເກີດຂຶ້ນ.

### ມາດຕາ 18 ການປະກອບເອກະສານ

ການປະກອບເອກະສານທີ່ຍື່ນຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ຄໍາຮ້ອງຂໍ;
2. ສັນຍາທີ່ກ່ຽວຂ້ອງ;
3. ຄໍາຕົກລົງເປັນລາຍລັກອັກສອນຂອງຄູ່ກໍລະນີ ທີ່ໃຫ້ນໍາເອົາຂໍ້ຂັດແຍ່ງມາແກ້ໄຂຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຖ້າມີ;
4. ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ.

### ມາດຕາ 19 ເນື້ອໃນຄໍາຮ້ອງຂໍ

ຄໍາຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
2. ບັນຫາທີ່ເກີດຂໍ້ຂັດແຍ່ງ;
3. ມູນຄ່າຂອງຂໍ້ຂັດແຍ່ງ;
4. ຂໍ້ສະເໜີຂອງຄູ່ກໍລະນີ.

### ມາດຕາ 20 (ປັບປຸງ) ການພິຈາລະນາຄໍາຮ້ອງຂໍ

ຫຼັງຈາກໄດ້ຮັບຄໍາຮ້ອງຂໍແລ້ວ ພາຍໃນກໍານົດເວລາ ເຈັດວັນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສໍານວນຄໍາຮ້ອງຂໍ ແລະ ອອກໝາຍເຊີນຄູ່ກໍລະນີ ເພື່ອເຂົ້າມາປຶກສາຫາລື ແລະ ຕົກລົງກ່ຽວກັບຮູບການແກ້ໄຂ <u>ພ້ອມທັງໃຫ້ຜູ້ຖືກຮ້ອງຂໍ ສົ່ງຄໍາແກ້ຄໍາຮ້ອງຂໍພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຊາບຄໍາຮ້ອງຂໍເປັນຕົ້ນໄປ.</u>

ຖ້າວ່າຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ມາຕາມໝາຍເຊີນ ໂດຍບໍ່ມີເຫດຜົນພຽງພໍ ຄໍາຮ້ອງຂໍດັ່ງກ່າວກໍຕົກໄປ ແລະ ສົ່ງສໍານວນຄໍາຮ້ອງຄືນໃຫ້ແກ່ຜູ້ຮ້ອງຂໍ. <u>ຍົກເວັ້ນກໍລະນີ ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ ໃນການເລືອກຮູບການແກ້ໄຂດ້ວຍການຕັດສິນ ແລະ ຈໍານວນຜູ້ຕັດສິນ ເຖິງວ່າຄູ່ກໍລະນີຝ່າຍໃດໜຶ່ງບໍ່ເຂົ້າມາຕາມໝາຍເຊີນໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ດໍາເນີນການຕັດສິນຕາມກົດໝາຍ.</u>

ໃນກໍລະນີ ທີ່ຄໍາຮ້ອງຂໍ ຫາກບໍ່ຖືກຕ້ອງຕາມມາດຕາ 16 ຂອງກົດໝາຍສະບັບນີ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບພ້ອມດ້ວຍເຫດຜົນ ພາຍໃນກໍານົດເວລາ ເຈັດ ວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍນັ້ນເປັນຕົ້ນໄປ.

**ມາດຕາ 21 (ໃໝ່) ການສົ່ງໝາຍເຊີນ**

ການສົ່ງໝາຍເຊີນ ໃຫ້ປະຕິບັດ ດັ່ງນີ້:

- ສົ່ງໂດຍກົງຫາຜູ້ຖືກເຊີນ ຫຼື ການຈັດຕັ້ງບ່ອນຜູ້ຖືກເຊີນສັງກັດຢູ່;
- ສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ.

ການສົ່ງໝາຍເຊີນໂດຍກົງໃຫ້ຜູ້ຖືກເຊີນ ຕ້ອງໃຫ້ຜູ້ກ່ຽວລົງລາຍເຊັນ ແລະ ຂຽນຊື່ແຈ້ງ ຫຼື ແປະໂປ້ມືໃສ່ປຶ້ມບັນທຶກການສົ່ງເອກະສານ, ຖ້າຜູ້ກ່ຽວຫາກບໍ່ຍອມລົງລາຍເຊັນ ກໍໃຫ້ໝາຍເຫດໄວ້. ໃນກໍລະນີສົ່ງຜ່ານການຈັດຕັ້ງບ່ອນຜູ້ຖືກເຊີນສັງກັດຢູ່ ກໍໃຫ້ຜູ້ຕາງໜ້າການຈັດຕັ້ງເຊັນຮັບໝາຍເຊີນແທນ.

ການສົ່ງໝາຍເຊີນຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ ຈະຖືວ່າຜູ້ຖືກເຊີນ ໄດ້ຮັບໝາຍເຊີນນັບແຕ່ວັນທີ່ໄປສະນີ ຫຼື ໂທລະຄົມມະນາຄົມ ໄດ້ສົ່ງໝາຍເຊີນເປັນຕົ້ນໄປ.

ການສົ່ງໝາຍເຊີນ ຕ້ອງສົ່ງກ່ອນວັນນັດໝາຍຢ່າງໜ້ອຍ ສາມ ວັນ.

**ມາດຕາ 22 ການເລືອກຮູບການແກ້ໄຂ**

ຄູ່ກໍລະນີ ມີສິດເລືອກເອົາການແກ້ໄຂ ດ້ວຍການໄກ່ເກ່ຍ ຫຼື ການຕັດສີນ ເວັ້ນເສຍແຕ່ກໍລະນີທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ໃນກໍລະນີ ຄູ່ກໍລະນີບໍ່ເປັນເອກະພາບໃນການເລືອກຮູບການແກ້ໄຂ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ພິຈາລະນາ.

**ມາດຕາ 23 (ໃໝ່) ຜູ້ຊ່ຽວຊານ**

ຜູ້ຊ່ຽວຊານ ແມ່ນ ບຸກຄົນ ທີ່ມີຄວາມຮູ້, ຄວາມຊໍານິຊໍານານ ແລະ ປະສົບການໃນວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນ ຫຼື ອົງການທີ່ກ່ຽວຂ້ອງ.

ໃນກໍລະນີມີຄວາມຈໍາເປັນ ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສີນ ຫຼື ຄະນະກໍາມະການຕັດສີນ ສາມາດສະເໜີ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແຕ່ງຕັ້ງຜູ້ຊ່ຽວຊານ ເພື່ອທໍາການພິສູດຂໍ້ມູນ, ຫຼັກຖານໃດໜຶ່ງທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ.

ຜູ້ຊ່ຽວຊານ ຕ້ອງສະຫຼຸບລາຍງານຜົນຂອງການພິສູດຂໍ້ມູນ, ຫຼັກຖານ ຢ່າງເປັນລາຍລັກອັກສອນແລ້ວສົ່ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອມອບໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສີນ ຫຼື ຄະນະກໍາມະການຕັດສີນ.

ຄູ່ກໍລະນີ ມີສິດສະເໜີຄໍາເຫັນເປັນລາຍລັກອັກສອນຕໍ່ບົດລາຍງານດັ່ງກ່າວ ຫຼື ຊັກຖາມຜູ້ຊ່ຽວຊານທີ່ຫ້ອງປະຊຸມການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຜູ້ຊ່ຽວຊານ ຕ້ອງຮັບຜິດຊອບຕໍ່ຜົນຂອງການພິສູດຂໍ້ມູນ, ຫຼັກຖານຂອງຕົນ.

## ໝວດທີ 4
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ

**ມາດຕາ 24 ການໄກ່ເກ່ຍ**

ການໄກ່ເກ່ຍ ແມ່ນການແກ້ໄຂຂໍ້ຂັດແຍ່ງ ໂດຍຄູ່ກໍລະນີເອງ ດ້ວຍການປະນີປະນອມ, ເຈລະຈາ ແລະ ປຶກສາຫາລື ຊຶ່ງມີຜູ້ໄກ່ເກ່ຍ ໜຶ່ງຄົນ ຫຼື ຫຼາຍຄົນເປັນຄົນກາງ.

**ມາດຕາ 25 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກ່ຍ**

ໃນການດຳເນີນການໄກ່ເກ່ຍ ຄູ່ກໍລະນີມີສິດເລືອກເອົາຜູ້ໄກ່ເກ່ຍ ໜຶ່ງ ຫຼື ຫຼາຍຄົນ, ແຕ່ຕ້ອງເປັນຈຳນວນຄີກ ຈາກປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໃນກໍລະນີ ເລືອກຜູ້ໄກ່ເກ່ຍ ໜຶ່ງຄົນ ໃຫ້ຄູ່ກໍລະນີຕົກລົງເລືອກເອົາຜູ້ໄກ່ເກ່ຍ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ຄູ່ກໍລະນີໄດ້ຕົກລົງໃຫ້ໄກ່ເກ່ຍເປັນຕົ້ນໄປ. ຖ້າຄູ່ກໍລະນີຫາກເລືອກບໍ່ໄດ້ ສູນ ຫຼື ຫ້ອງ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນກຳນົດເວລາ ຫ້າ ວັນ.

ໃນກໍລະນີ ເລືອກຜູ້ໄກ່ເກ່ຍ ສາມຄົນ ໃຫ້ຄູ່ກໍລະນີແຕ່ລະຝ່າຍເລືອກເອົາຜູ້ໄກ່ເກ່ຍ ໜຶ່ງຄົນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນທີ່ຄູ່ກໍລະນີໄດ້ຕົກລົງໃຫ້ໄກ່ເກ່ຍເປັນຕົ້ນໄປ. ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍ ຫາກເລືອກບໍ່ໄດ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນກຳນົດເວລາ ຫ້າວັນ. ຫຼັງຈາກນັ້ນ ໃຫ້ຜູ້ໄກ່ເກ່ຍ ສອງຄົນ ທີ່ຖືກເລືອກນັ້ນ ເລືອກເອົາຜູ້ໄກ່ເກ່ຍ ຜູ້ທີສາມ ມາເປັນປະທານຄະນະກຳມະການໄກ່ເກ່ຍ ພາຍໃນກຳນົດເວລາ ຫ້າວັນ, ຖ້າຜູ້ໄກ່ເກ່ຍ ສອງຄົນ ຫາກເລືອກບໍ່ໄດ້, ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນກຳນົດເວລາ ຫ້າ ວັນ.

ໃນກໍລະນີ ທີ່ຄູ່ກໍລະນີຕົກລົງເລືອກເອົາຜູ້ໄກ່ເກ່ຍຫຼາຍກວ່າ ສາມຄົນ ກໍໃຫ້ປະຕິບັດຄ້າຍຄືກັນກັບການເລືອກຜູ້ໄກ່ເກ່ຍ ສາມຄົນ ຕາມທີ່ໄດ້ກຳນົດໄວ້ໃນວັກ ສາມ ຂອງມາດຕານີ້.

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຕ່ງຕັ້ງຜູ້ໄກ່ເກ່ຍພາຍໃນກຳນົດເວລາ ຫ້າວັນ ນັບແຕ່ວັນທີ່ໄດ້ຮັບລາຍຊື່ຜູ້ໄກ່ເກ່ຍ ຕາມການສະເໜີຂອງຄູ່ກໍລະນີ ຫຼື ຕາມການເລືອກຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 26 (ປັບປຸງ) ການຖອນຕົວ ຫຼື ການຄ້ານຕົວຜູ້ໄກ່ເກ່ຍ**

ຜູ້ໄກ່ເກ່ຍ ມີສິດຖອນຕົວ ອອກຈາກການດຳເນີນການໄກ່ເກ່ຍ ຖ້າຫາກເຫັນວ່າຕົນເປັນຍາດພີ່ນ້ອງ, ມີຜົນປະໂຫຍດຮ່ວມກັບຝ່າຍໃດໜຶ່ງ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີອີກຝ່າຍໜຶ່ງ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

ຄູ່ກໍລະນີ ມີສິດຄ້ານຕົວຜູ້ໄກ່ເກ່ຍ ຖ້າຫາກເຫັນວ່າຜູ້ໄກ່ເກ່ຍນັ້ນຕົກຢູ່ໃນກໍລະນີ ທີ່ໄດ້ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້.

ໃນກໍລະນີ ມີການຖອນຕົວ, ຜູ້ໄກ່ເກ່ຍ ຕ້ອງສະເໜີເຈດຈຳນົງຂອງຕົນ ພ້ອມດ້ວຍເຫດຜົນຢ່າງເປັນລາຍລັກອັກສອນ ຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

ໃນກໍລະນີ ມີການຄ້ານຕົວ, ຄູ່ກໍລະນີຝ່າຍທີ່ຕ້ອງການຄ້ານຕົວນັ້ນ ຕ້ອງສະເໜີເຈດຈຳນົງຂອງຕົນພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນ ຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເພື່ອພິຈາລະນາ.

ພາຍຫຼັງໄດ້ຮັບການສະເໜີຖອນຕົວ ຫຼື ຄ້ານຕົວແລ້ວ, ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງພິຈາລະນາພາຍໃນກຳນົດເວລາ ສິບຫ້າ ວັນ, ຖ້າວ່າ ການສະເໜີຖອນຕົວ ຫຼື ຄ້ານຕົວ ມີເຫດຜົນພຽງພໍ ກໍໃຫ້ອອກຂໍ້ຕົກລົງກ່ຽວກັບການຖອນຕົວ ຫຼື ຄ້ານຕົວ ແລ້ວໃຫ້ດຳເນີນການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍຄົນໃໝ່ແທນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

**ມາດຕາ 27 (ປັບປຸງ) ການດຳເນີນການໄກ່ເກ່ຍ**

ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງເອົາຄຳໃຫ້ການຄູ່ກໍລະນີທັງສອງຝ່າຍ ເພື່ອກຳນົດແຜນການໄກ່ເກ່ຍ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນແຕ່ງຕັ້ງເປັນຕົ້ນໄປ ແລ້ວແຈ້ງມາຍັງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການໄກ່ເກ່ຍ ຕ້ອງດຳເນີນໂດຍຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ. ຄູ່ກໍລະນີ ມີສິດສະເໜີບັນຫາ, ຂໍ້ມູນ ຫຼື ຫຼັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງ ແລະ ວິທີທາງອອກຕໍ່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍໃນໄລຍະເວລາ ດຳເນີນການໄກ່ເກ່ຍ.

ໃນການດຳເນີນການໄກ່ເກ່ຍ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງສະເໜີ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ອອກໝາຍເຊີນຄູ່ກໍລະນີ ຫຼື ບຸກຄົນທີ່ກ່ຽວຂ້ອງເພື່ອເຂົ້າຮ່ວມໃນການດຳເນີນການໄກ່ເກ່ຍ.

**ມາດຕາ 28 (ໃໝ່) ການເລື່ອນການໄກ່ເກ່ຍ**

ການໄກ່ເກ່ຍ ອາດຈະເລື່ອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ບໍ່ໄດ້ເຂົ້າຮ່ວມການໄກ່ເກ່ຍ ໂດຍມີເຫດຜົນພຽງພໍ;

2. ຜູ້ໄກ່ເກ່ຍ ຫຼື ກຳມະການໄກ່ເກ່ຍຄົນໃດໜຶ່ງ ບໍ່ສາມາດເຂົ້າຮ່ວມການໄກ່ເກ່ຍໄດ້ ຍ້ອນເຈັບເປັນກະທັນຫັນ ຫຼື ມີພາລະກິດທີ່ຈຳເປັນ;

3. ກໍລະນີມີຄວາມຈຳເປັນຕ້ອງໄດ້ເກັບກຳ ຫຼື ພິສູດ ຂໍ້ມູນ, ຫຼັກຖານໃໝ່;

4. ບຸກຄົນອື່ນ ທີ່ມີຄວາມສຳຄັນຕໍ່ການໄກ່ເກ່ຍຂໍ້ຂັດແຍ່ງນັ້ນ ບໍ່ໄດ້ເຂົ້າຮ່ວມໃນການໄກ່ເກ່ຍ.

ໃນກໍລະນີ ມີການເລື່ອນການໄກ່ເກ່ຍ, ຜູ້ໄກ່ເກ່ຍ ຫຼື ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ ໃນເວລາທີ່ເໝາະສົມ.

ການເລື່ອນການໄກ່ເກ່ຍ ທຸກກໍລະນີ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດຳເນີນການໄກ່ເກ່ຍຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 29 (ໃໝ່) ການໂຈະການໄກ່ເກ່ຍ**

ການໂຈະການໄກ່ເກ່ຍ ແມ່ນການຢຸດການໄກ່ເກ່ຍໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງທີ່ເປັນອຸປະສັກຕໍ່ການໄກ່ເກ່ຍ.

ການໄກ່ເກ່ຍ ອາດຈະໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ຫາກໄດ້ສູນເສຍຄວາມສາມາດທາງດ້ານການປະພຶດ, ເຈັບເປັນຢ່າງກະທັນຫັນ ຫຼື ເສຍຊີວິດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກຖືກຍຸບເລີກ ແຕ່ຍັງມີຜູ້ສືບທອດສິດ ແລະ ພັນທະຢູ່;

2. ຄູ່ກໍລະນີຝ່າຍໃດໜຶ່ງ ຫາກໄດ້ຍົກຍ້າຍ ຫຼື ອອກຈາກບ່ອນຢູ່ເກົ່າ ຊຶ່ງບໍ່ຮູ້ບ່ອນຢູ່ໃໝ່ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

3. ກໍລະນີຈຳເປັນຕ້ອງລໍຖ້າໃຫ້ມີການພິຈາລະນາຂໍ້ຂັດແຍ່ງອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໃນກໍລະນີ ມີການໂຈະການໄກ່ເກ່ຍ, ຫົວໜ້າ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງໂຈະການໄກ່ເກ່ຍ ແລ້ວ ແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ.

ການໂຈະການໄກ່ເກ່ຍ ທຸກກໍລະນີ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດຳເນີນການໄກ່ເກ່ຍຂອງສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 30 (ປັບປຸງ) ການສິ້ນສຸດການໄກ່ເກ່ຍ**

ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຜູ້ຮ້ອງຂໍ ຖອນຄໍາຮ້ອງຂໍຄືນ;
2. ຄູ່ກໍລະນີ ສາມາດຕົກລົງກັນໄດ້ ຫຼື ບໍ່ສາມາດຕົກລົງກັນໄດ້;
3. ຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງໝົດ ບໍ່ເຂົ້າຮ່ວມການໄກ່ເກ່ຍໂດຍບໍ່ມີເຫດຜົນພຽງພໍ;
4. ຄູ່ກໍລະນີຝ່າຍໃດໜຶ່ງ ເສຍຊີວິດໂດຍບໍ່ມີຜູ້ສືບທອດ;
5. ຄູ່ກໍລະນີ ຕົກລົງປ່ຽນຮູບການແກ້ໄຂ.

**ມາດຕາ 31 ບົດບັນທຶກຂອງການໄກ່ເກ່ຍ**

ບົດບັນທຶກຂອງການໄກ່ເກ່ຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີສໍານວນຂໍ້ຂັດແຍ່ງ ແລະ ສະຖານທີ່ຂອງການໄກ່ເກ່ຍ;

2. ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ແລະ ຜູ້ບັນທຶກ;

3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການ ຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ.

4. ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ;

5. ຜົນຂອງການໄກ່ເກ່ຍ ທີ່ຕົກລົງກັນໄດ້ ຫຼື ຕົກລົງກັນບໍ່ໄດ້;

6. ວິທີການຈັດຕັ້ງປະຕິບັດຄໍາຕົກລົງຂອງການໄກ່ເກ່ຍ;

7. ຄວາມຮັບຜິດຊອບໃນການຈ່າຍຄ່າທໍານຽມ, ຄ່າບໍລິການ, ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນທີ່ຈໍາເປັນຂອງຄູ່ກໍລະນີແຕ່ລະຝ່າຍ;

8. ເວລາ, ວັນ, ເດືອນ, ປີ ຂອງການສິ້ນສຸດການໄກ່ເກ່ຍ, ລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ, ຜູ້ບັນທຶກ ແລະ ຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນທີ່ຮ້ອງຂໍໃຫ້ດໍາເນີນການໄກ່ເກ່ຍ.

ໃນການໄກ່ເກ່ຍແຕ່ລະຄັ້ງ ຕ້ອງມີຜູ້ບັນທຶກເຂົ້າຮ່ວມນໍາ ຊຶ່ງແມ່ນພະນັກງານຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 32 (ປັບປຸງ) ການປ່ຽນຮູບການແກ້ໄຂ**

ເມື່ອບໍ່ສາມາດໄກ່ເກ່ຍກັນໄດ້ ຄູ່ກໍລະນີ ມີສິດສະເໜີໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດໍາເນີນການແກ້ໄຂດ້ວຍຮູບການຕັດສີນ. ຜູ້ໄກ່ເກ່ຍຂໍ້ຂັດແຍ່ງນັ້ນ ສາມາດຖືກເລືອກ ແລະ ແຕ່ງຕັ້ງເປັນຜູ້ຕັດສິນຂໍ້ຂັດແຍ່ງນັ້ນອີກ.

ໃນກໍລະນີທີ່ຄູ່ກໍລະນີ ຫາກບໍ່ເຫັນດີໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດໍາເນີນການແກ້ໄຂດ້ວຍຮູບການຕັດສິນແລ້ວ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ.

## ໝວດທີ 5
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສີນ

**ມາດຕາ 33 (ປັບປຸງ) ການຕັດສີນ**

ການຕັດສີນ ແມ່ນ ການຕົກລົງຂອງຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 34 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ຕັດສີນ**

ໃນການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສີນນັ້ນ ຄູ່ກໍລະນີມີສິດເລືອກເອົາ ຜູ້ຕັດສີນ ໜຶ່ງ ຫຼື ຫຼາຍຄົນກໍໄດ້ຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສີນ ແຕ່ຕ້ອງເປັນຈຳນວນຄີກສະເໝີ.

ໃນການເລືອກຜູ້ຕັດສີນ ໃຫ້ປະຕິບັດຕາມຫຼັກການດຽວກັນກັບການເລືອກຜູ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

ໃນກໍລະນີ ຄູ່ກໍລະນີຝ່າຍໃດໜຶ່ງບໍ່ໄດ້ເຂົ້າມາຕາມໝາຍເຊີນ ຕາມທີ່ໄດ້ກຳນົດໄວ້ໃນ ວັກ ສອງ ຂອງມາດຕາ 20 ຂອງກົດໝາຍສະບັບນີ້ ໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ເລືອກ ແລະ ແຕ່ງຕັ້ງຜູ້ຕັດສີນຕາມຈຳນວນທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 35 (ປັບປຸງ) ການຖອນຕົວ ຫຼື ການຄ້ານຕົວຜູ້ຕັດສີນ**

ການຖອນຕົວ ຫຼື ການຄ້ານຕົວຜູ້ຕັດສີນ ໃຫ້ປະຕິບັດຄືກັນກັບການຖອນຕົວ ຫຼື ການຄ້ານຕົວ ຜູ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

**ມາດຕາ 36 (ປັບປຸງ) ກຳນົດເວລາດຳເນີນການຕັດສີນ**

ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງເອົາຄຳໃຫ້ການຄູ່ກໍລະນີທັງສອງຝ່າຍ ເພື່ອກຳນົດແຜນການຕັດສີນ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນແຕ່ງຕັ້ງເປັນຕົ້ນໄປ ແລ້ວແຈ້ງໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການດຳເນີນການຕັດສີນ ຕ້ອງໃຫ້ສຳເລັດພາຍໃນກຳເວລາ ສາມ ເດືອນ ນັບແຕ່ວັນແຕ່ງຕັ້ງຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນເປັນຕົ້ນໄປ ເວັ້ນເສຍແຕ່ກໍລະນີທີ່ມີຄວາມຫຍຸ້ງຍາກ ຍ້ອນການປະກອບຫຼັກຖານ ຫຼື ດ້ວຍເຫດຜົນອື່ນ ຊຶ່ງຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງແຈ້ງໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງເຫດຜົນດັ່ງກ່າວໃຫ້ຄູ່ກໍລະນີຊາບ.

ໃນການດຳເນີນການຕັດສີນ ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ຕ້ອງສະເໜີ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ອອກໝາຍເຊີນຄູ່ກໍລະນີ ຫຼື ບຸກຄົນທີ່ກ່ຽວຂ້ອງ ເພື່ອເຂົ້າຮ່ວມການດຳເນີນການຕັດສີນ.

**ມາດຕາ 37 (ປັບປຸງ) ການສະເໜີຂໍ້ມູນ, ຫຼັກຖານ**

ຄູ່ກໍລະນີ ມີພັນທະສະເໜີຂໍ້ມູນ, ຫຼັກຖານກ່ຽວກັບຂໍ້ຂັດແຍ່ງໃຫ້ແກ່ ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ.

ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ອາດຈະລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່ ຕາມການສະເໜີ ຫຼື ການເຫັນດີຂອງຄູ່ກໍລະນີ.

ໃນກໍລະນີ ຈໍາເປັນທີ່ຕ້ອງການພິສູດຂໍ້ມູນ, ຫຼັກຖານໃດໜຶ່ງ ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ມີສິດສະເໜີເອົາຜູ້ຊ່ຽວຊານ ເພື່ອພິສູດຂໍ້ມູນ, ຫຼັກຖານນັ້ນ.

ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ຕ້ອງຄົ້ນຄວ້າຄໍາຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ. ເມື່ອເກັບກໍາຂໍ້ມູນ, ຫຼັກຖານ ຄົບຖ້ວນແລ້ວ ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ຕ້ອງເຊີນຄູ່ກໍລະນີ ມາອະທິບາຍເຫດຜົນ ແລະ ສະເໜີຂໍ້ມູນ, ຫຼັກຖານຕື່ມອີກ ກ່ອນວັນຕັດສິນ.

**ມາດຕາ 38 (ໃໝ່) ການໂຈະກໍານົດເວລາການດໍາເນີນການຕັດສິນ**

ກໍານົດເວລາການດໍາເນີນການຕັດສິນ ອາດຈະໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ຫາກໄດ້ສູນເສຍຄວາມສາມາດທາງດ້ານການປະພຶດ, ເຈັບເປັນຢ່າງກະທັນຫັນ ຫຼື ເສຍຊີວິດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກຖືກຍຸບເລີກ ແຕ່ຍັງມີຜູ້ສືບທອດສິດ ແລະ ພັນທະຢູ່;
2. ກໍລະນີ ຈໍາເປັນຕ້ອງລໍຖ້າ ໃຫ້ມີການພິຈາລະນາຂໍ້ຂັດແຍ່ງອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ເຫດສຸດວິໄສ ຫຼື ເຫດບັງເອີນ.

ໃນກໍລະນີ ມີການໂຈະການຕັດສິນ, ຫົວໜ້າ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງໂຈະການຕັດສິນ ແລ້ວແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ.

ການໂຈະການຕັດສິນ ທຸກກໍລະນີ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດໍາເນີນການຕັດສິນຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໄລຍະເວລາການໂຈະ ບໍ່ໃຫ້ນັບເຂົ້າໃນກໍານົດເວລາໃນການດໍາເນີນການຕັດສິນ.

**ມາດຕາ 39 (ໃໝ່) ການສອບຖາມ ແລະ ການໂຕ້ແຍ່ງ**

ໃນການສອບຖາມ ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ຕ້ອງໃຫ້ຄູ່ກໍລະນີ ສະເໜີຂໍ້ມູນ, ຫຼັກຖານ ພ້ອມທັງ ອະທິບາຍ, ຊີ້ແຈງຂໍ້ມູນ, ຫຼັກຖານຂອງຕົນ ພ້ອມດຽວກັນນັ້ນ ກໍຕ້ອງຮັບປະກັນໃຫ້ຄູ່ກໍລະນີໄດ້ມີການໂຕ້ແຍ່ງ, ຊັກຖາມ ຕໍ່ຫຼັກຖານຂອງຄູ່ກໍລະນີອີກຝ່າຍໜຶ່ງ.

**ມາດຕາ 40 (ປັບປຸງ) ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ**

ໃນໄລຍະດໍາເນີນການພິຈາລະນາຕັດສິນນັ້ນ ຖ້າຫາກຄູ່ກໍລະນີສະເໜີໃຫ້ນໍາໃຊ້ມາດຕະການໃດໜຶ່ງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນແລ້ວ ຖ້າເຫັນວ່າມີຄວາມຈໍາເປັນ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ຈະສົ່ງຄໍາສະເໜີ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ໄປຍັງສານປະຊາຊົນ ເພື່ອພິຈາລະນາອອກຄໍາສັ່ງ ພາຍໃນກໍານົດເວລາ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາສະເໜີເປັນຕົ້ນໄປ.

**ມາດຕາ 41 (ປັບປຸງ) ສິດໃນການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ**

ໃນໄລຍະ ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ພິຈາລະນາຂໍ້ຂັດແຍ່ງນັ້ນ ຄູ່ກໍລະນີ ຍັງມີສິດຕົກລົງແກ້ໄຂນໍາກັນກ່ອນການຕັດສິນກໍໄດ້. ຄໍາຕົກລົງຂອງຄູ່ກໍລະນີນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງ ຄູ່ກໍລະນີ, ຜູ້ບັນທຶກ, ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ແລະ ຫົວໜ້າ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນຮ້ອງຂໍໃຫ້ດໍາເນີນການຕັດສິນນັ້ນ.

ຄຳຕົກລົງ ຂອງຄູ່ກໍລະນີກ່ອນການຕັດສິນ ມີຜົນສັກສິດຄືກັນກັບຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

**ມາດຕາ 42 (ປັບປຸງ) ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ**

ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງຢູ່ໃນຂອບເຂດຄຳຮ້ອງຂໍຂອງຄູ່ກໍລະນີ. ໃນກໍລະນີທີ່ ຄະນະກຳມະການຕັດສິນ ຫາກບໍ່ເປັນເອກະສັນກັນ ການຕັດສິນໃຫ້ຖືເອົາຕາມສຽງສ່ວນຫຼາຍ.

ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງອ່ານຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ. ໃນກໍລະນີ ຄູ່ກໍລະນີຝ່າຍໃດໜຶ່ງ ບໍ່ເຂົ້າຮ່ວມການຕັດສິນ ໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ອ່ານຄຳຕັດສິນລັບຫຼັງ.

ຄຳຕັດສິນ ມີຜົນສັກສິດ ນັບແຕ່ວັນລົງຄຳຕັດສິນ ຫຼື ວັນຄູ່ກໍລະນີ ໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ.

**ມາດຕາ 43 (ໃໝ່) ການເລື່ອນການອ່ານຄຳຕັດສິນ**

ຖ້າຫາກມີສາເຫດໃດໜຶ່ງ ທີ່ບໍ່ສາມາດອ່ານຄຳຕັດສິນໄດ້ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ກໍຈະເລື່ອນການອ່ານຄຳຕັດສິນ ແຕ່ຢ່າງຊ້າບໍ່ໃຫ້ກາຍ ຫ້າ ວັນ.

**ມາດຕາ 44 (ປັບປຸງ) ເນື້ອໃນຄຳຕັດສິນ**

ຄຳຕັດສິນ ມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີ ສຳນວນ ຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ອອກຄຳຕັດສິນ;
2. ຊື່ ແລະ ນາມສະກຸນ ຂອງ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ແລະ ຜູ້ບັນທຶກ;
3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ທີ່ຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
4. ເນື້ອໃນຕົ້ນຕໍຂອງຂໍ້ຂັດແຍ່ງ, ຄຳວິນິດໄສ ແລະ ບ່ອນອີງຂອງຄຳຕັດສິນ;
5. ການຕັດສິນ;
6. ຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ, ຄ່າແຮງງານ ແລະ ຄ່າບໍລິການຕ່າງໆ ຂອງຄູ່ກໍລະນີແຕ່ລະຝ່າຍ;
7. ຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນ;
8. ສິດຂອງຄູ່ກໍລະນີ ໃນການຄັດຄ້ານຄຳຕັດສິນ;
9. ລາຍເຊັນ ຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ, ຜູ້ບັນທຶກ ແລະ ຫົວໜ້າສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ບ່ອນຮ້ອງຂໍໃຫ້ດຳເນີນການຕັດສິນນັ້ນ.

ໃນການດຳເນີນການຕັດສິນແຕ່ລະຄັ້ງ ຕ້ອງມີຜູ້ບັນທຶກເຂົ້າຮ່ວມນຳ ຊຶ່ງແມ່ນພະນັກງານຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 45 (ໃໝ່) ການດັດແກ້ຄຳຕັດສິນ ແລະ ການຕັດສິນເພີ່ມເຕີມ**

ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ໄດ້ຮັບຊາບຄຳຕັດສິນເປັນຕົ້ນໄປ ຄູ່ກໍລະນີ ມີສິດສະເໜີ ໃຫ້ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ດັດແກ້ຄຳຕັດສິນກ່ຽວກັບຂໍ້ຜິດພາດໃດໜຶ່ງ ເປັນຕົ້ນ ການຄິດໄລ່, ການພິມ ຫຼື ຂໍ້ຜິດພາດອື່ນ ທີ່ບໍ່ໄດ້ປ່ຽນເນື້ອໃນຄຳຕັດສິນ.

ໃນກໍລະນີ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ລົງຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມການຮ້ອງຂໍ ຄູ່ກໍລະນີ ກໍມີສິດສະເໜີໃຫ້ພິຈາລະນາຕັດສິນເພີ່ມເຕີມ ຕາມກຳນົດເວລາທີ່ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້.

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງພິຈາລະນາດັດແກ້ຄຳຕັດສິນ ຫຼື ຕັດສິນເພີ່ມເຕີມ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ການດັດແກ້ຄຳຕັດສິນ ຫຼື ການຕັດສິນເພີ່ມເຕີມນັ້ນ ໃຫ້ຖືເປັນພາກສ່ວນໜຶ່ງຂອງຄຳຕັດສິນ.

**ມາດຕາ 46 (ປັບປຸງ) ການຄັດຄ້ານຄຳຕັດສິນ**

ຄູ່ກໍລະນີ ມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນເປັນຕົ້ນໄປ ໃນກໍລະນີໃດໜຶ່ງ ດັ່ງນີ້ :

1. ຄູ່ກໍລະນີ ບໍ່ໄດ້ຕົກລົງໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການຕັດສິນ ຫຼື ຄຳຕົກລົງນັ້ນເປັນໂມຄະ;
2. ການປະກອບ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ ແລະ ກົດໝາຍ;
3. ການດຳເນີນການຕັດສິນ ບໍ່ສອດຄ່ອງກັບລະບຽບການ, ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບໍ່ນຳໃຊ້ລະບຽບການ, ກົດໝາຍໃນການແກ້ໄຂ ຕາມທີ່ຄູ່ກໍລະນີຕົກລົງກັນໃນສັນຍາ;
4. ຂໍ້ມູນ, ຫຼັກຖານ ທີ່ຖືເປັນພື້ນຖານໃນການຕັດສິນນັ້ນ ມີການປອມແປງ; ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຊຶ່ງສິ່ງຜົນກະທົບຕໍ່ຄວາມທ່ຽງທຳໃນການຕັດສິນ;
5. ຂໍ້ຂັດແຍ່ງ ບໍ່ຢູ່ໃນຂອບເຂດສິດຂອງການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
6. ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ.

## ພາກທີ III
## ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 47 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ອົງການຈັດຕັ້ງທີ່ມີລັກສະນະວິຊາຊີບສັງຄົມ ແລະ ກົດໝາຍ ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການຍຸຕິທຳ, ມີພາລະບົດບາດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ແລະ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 48 ໂຄງປະກອບການຈັດຕັ້ງຂອງອົງການແກ້ໄຂຂໍ້ຂັດແຍ່ງ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ "ສກສ" ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທຳ ແລະ ມີຖານະທຽບເທົ່າກົມ.

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ "ຫກສ" ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງພະແນກຍຸຕິທຳ. ຫົວໜ້າຫ້ອງການມີຖານະທຽບເທົ່າ ຮອງຫົວໜ້າພະແນກຂອງແຂວງ, ນະຄອນຫຼວງ.

ສຳລັບ ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີສ້າງ, ປັບປຸງກົດໝາຍ, ລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຂັ້ນເທິງທີ່ກ່ຽວຂ້ອງພິຈາລະນາ;
2. ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະມົນຕີ ກະຊວງຍຸຕິທຳ ເພື່ອແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ເຂົ້າໃນປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກປຶ້ມບັນຊີ;
3. ໂຄສະນາ, ສຶກສາອົບຮົມ ກົດໝາຍ, ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;
5. ຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
6. ຮັບຄຳຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ;
7. ກໍ່ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານວິຊາການ ໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
8. ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9. ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
10. ຊີ້ນຳດ້ານວິຊາການໃຫ້ແກ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
11. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;
12. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ກະຊວງຍຸຕິທຳ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດ ແລະ ໜ້າທີ່ຄືກັນກັບສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 ຂອງກົດໝາຍສະບັບນີ້. ສຳລັບສິດສະເໜີ ແຕ່ງຕັ້ງ, ປົດ ຜູ້ໄກ່ເກ່ຍ, ຜູ້ຕັດສິນ ເຂົ້າໃນປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນນັ້ນ ຕ້ອງສະເໜີຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

## ພາກທີ IV
## ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ

### ມາດຕາ 51 (ປັບປຸງ) ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ປະກອບດ້ວຍ ຜູ້ປະຈໍາການ ແລະ ຜູ້ບໍ່ປະຈໍາການ.

ຜູ້ປະຈໍາການ ແມ່ນ ພະນັກງານຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ຖືກແຕ່ງຕັ້ງຈາກ ລັດຖະມົນຕີກະຊວງຍຸຕິທໍາ.

ຜູ້ບໍ່ປະຈໍາການ ແມ່ນ ບຸກຄົນທີ່ມາຈາກສໍານັກງານ, ອົງການ, ຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ, ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ທີ່ມີຄວາມສະໝັກໃຈ ຊຶ່ງໄດ້ຮັບການແຕ່ງຕັ້ງ ຈາກ ລັດຖະມົນຕີກະຊວງຍຸຕິທໍາ ຕາມການຄັດເລືອກ ແລະ ການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຜູ້ໄກ່ເກ່ຍ ບໍ່ສາມາດເປັນຜູ້ຕັດສິນ, ສ່ວນຜູ້ຕັດສິນ ສາມາດເປັນຜູ້ໄກ່ເກ່ຍໄດ້.

### ມາດຕາ 52 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ

ບຸກຄົນທີ່ຈະເປັນຜູ້ໄກ່ເກ່ຍ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ມີຈັນຍາທໍາ ແລະ ບໍລິສຸດສັດຊື່;
2. ມີຄວາມຮູ້ ຄວາມສາມາດທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
3. ໄດ້ຜ່ານ ຫຼື ມີປະສົບປະການໃນວຽກງານ ຢ່າງໜ້ອຍ ຫ້າ ປີ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທໍາຜິດໂດຍເຈດຕະນາ;
5. ໄດ້ຜ່ານການຝຶກອົບຮົມກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ມີສຸຂະພາບດີ.

ສໍາລັບບຸກຄົນທີ່ຈະເປັນຜູ້ຕັດສິນ ນອກຈາກມີເງື່ອນໄຂຕາມຂໍ້ 1, 4, 5 ແລະ ຂໍ້ 6 ຂອງມາດຕານີ້ ຍັງຕ້ອງມີລະດັບການສຶກສາກົດໝາຍປະລິນຍາຕີ ຂຶ້ນໄປ ແລະ ມີປະສົບການດ້ານກົດໝາຍ ຢ່າງໜ້ອຍ ສິບ ປີ ຂຶ້ນໄປ.

### ມາດຕາ 53 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ສໍາລັບຄົນຕ່າງປະເທດ ແລະ ຄົນຕ່າງດ້າວ

ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ທີ່ມີຈຸດປະສົງສະໝັກເຂົ້າເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຢູ່ ສປປ ລາວ ນອກຈາກມີເງື່ອນໄຂ ຕາມມາດຕາ 52 ຂອງກົດໝາຍສະບັບນີ້ ຍັງຕ້ອງມີເງື່ອນໄຂຕື່ມອີກ ດັ່ງນີ້:

1. ໄດ້ຮັບອະນຸຍາດໃຫ້ເຂົ້າມາເຮັດວຽກຢ່າງຖືກຕ້ອງ ຫຼື ມີທີ່ຢູ່ຖາວອນ ຢູ່ ສປປ ລາວ;
2. ຮູ້ພາສາ ແລະ ວັດທະນາທໍາລາວດີ.

### ມາດຕາ 54 (ປັບປຸງ) ປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ

ປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ແມ່ນ ປຶ້ມສັງລວມລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ລວມທັງປະຫວັດຫຍໍ້ຂອງພວກກ່ຽວ.

ພາຍຫຼັງ ລັດຖະມົນຕີກະຊວງຍຸຕິທໍາ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນແລ້ວ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງສ້າງເປັນປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ແລ້ວຈັດພິມສົ່ງໃຫ້ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 55 (ໃໝ່) ການສິ້ນສຸດການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ**

ການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເສຍຊີວິດ;
2. ລາອອກ;
3. ຖືກປົດອອກຈາກເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຍ້ອນລະເມີດລະບຽບການ ຫຼື ກົດໝາຍ.

ການສິ້ນສຸດການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕ້ອງໄດ້ລຶບຊື່ຜູ້ກ່ຽວອອກຈາກປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ.

**ມາດຕາ 56 (ໃໝ່) ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ**

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ແມ່ນຜູ້ທີ່ຖືກແຕ່ງຕັ້ງ ໃຫ້ເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງປະເທດໃດໜຶ່ງ ແລະ ການແຕ່ງຕັ້ງດັ່ງກ່າວ ຍັງມີຜົນສັກສິດຢູ່.

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕ່າງປະເທດ ທີ່ມາເຄື່ອນໄຫວໄກ່ເກ່ຍ ຫຼື ຕັດສິນຂໍ້ຂັດແຍ່ງຢູ່ ສປປ ລາວ ຕ້ອງໄດ້ຮັບການອະນຸຍາດຈາກກະຊວງຍຸຕິທຳ.

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕ່າງປະເທດ ມີສິດໄກ່ເກ່ຍ ຫຼື ຕັດສິນຂໍ້ຂັດແຍ່ງ ຊຶ່ງຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ສອງທັງຝ່າຍ ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງປະເທດ.

**ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ຜູ້ໄກ່ເກ່ຍ ແລະ <u>ຜູ້ຕັດສິນ</u>**

ຜູ້ໄກ່ເກ່ຍ ແລະ <u>ຜູ້ຕັດສິນ</u> ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ຫຼື ປະຕິເສດ ການແກ້ໄຂຂໍ້ຂັດແຍ່ງ;
2. ເປັນເອກະລາດໃນການແກ້ໄຂຂໍ້ຂັດແຍ່ງ;
3. ຮັບປະກັນການແກ້ໄຂຂໍ້ຂັດແຍ່ງ ໃຫ້ມີຄວາມຍຸຕິທຳ, ວ່ອງໄວ ແລະ ປອດໃສ;
4. ປະຕິບັດຖືກຕ້ອງຕາມຫຼັກຈັນຍາ<u>ບັນ</u>ຂອງວິຊາຊີບ;
5. ລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່;
6. ໄດ້ຮັບຄ່າແຮງງານ ຕາມການຕົກລົງກັບຄູ່ກໍລະນີ;
7. ຮັກສາຄວາມລັບຂອງຂໍ້ຂັດແຍ່ງ ຍົກເວັ້ນຂໍ້ມູນ ທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ;
8. ເສຍພັນທະ ໃຫ້ລັດຕາມກົດໝາຍ;
9. <u>ນຳໃຊ້</u>ສິດ ແລະ <u>ປະຕິບັດ</u>ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ V
## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 58 (ປັບປຸງ) ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄຳຕົກລົງຂອງການໄກ່ເກ່ຍ;

2. ຄຳຕົກລົງຂອງຄູ່ກໍລະນີ ກ່ອນການຕັດສິນ;

3. ຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

**ມາດຕາ 59 (ໃໝ່) ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ**

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດປະຕິບັດໄດ້ດ້ວຍ ສອງ ວິທີ ດັ່ງນີ້:

1. ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ;

2. ການຈັດຕັ້ງປະຕິບັດໂດຍອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 60 (ປັບປຸງ) ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ**

ຄູ່ກໍລະນີ ມີພັນທະປະຕິບັດຕາມເນື້ອໃນຄຳຕົກລົງຂອງການໄກ່ເກ່ຍ ຫຼື ຄຳຕົກລົງຂອງຄູ່ກໍລະນີ ກ່ອນການຕັດສິນ.

ສຳລັບການຈັດຕັ້ງປະຕິບັດຄຳຕັດສິນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຄູ່ກໍລະນີ ຕ້ອງປະຕິບັດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນມີຄຳຕັດສິນ ຫຼື ຮັບຊາບຄຳຕັດສິນເປັນຕົ້ນໄປ.

ພາຍຫຼັງ ຄູ່ກໍລະນີໄດ້ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສຳເລັດແລ້ວ ຕ້ອງແຈ້ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 61 (ປັບປຸງ) ການຈັດຕັ້ງປະຕິບັດໂດຍອີງການຈັດຕັ້ງປະຕິບັດຄາຕັດສິນຂອງສານ**

ໃນກໍລະນີ ຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມເສຍປະໂຫຍດ ມີສິດຮ້ອງຂໍຕໍ່ສານປະຊາຊົນ ພິຈາລະນາອອກຄຳຊີ້ຂາດ ເພື່ອໃຫ້ອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວໂດຍໄວ.

**ມາດຕາ 62 (ປັບປຸງ) ການຊີ້ຂາດຂອງສານປະຊາຊົນ**

ເມື່ອໄດ້ຮັບຄຳຮ້ອງຂອງຄູ່ກໍລະນີ ແລ້ວ ສານປະຊາຊົນ ຕ້ອງພິຈາລະນາອອກຄຳຊີ້ຂາດ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນ ຕ້ອງກວດເບິ່ງການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍສະບັບນີ້ເທົ່ານັ້ນ. ຖ້າເຫັນວ່າຖືກຕ້ອງແລ້ວ ສານປະຊາຊົນ ຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານປະຊາຊົນ ມີຜົນບັງຄັບປະຕິບັດ ໃນທັນໃດ ແລະ ບໍ່ສາມາດອຸທອນໄດ້.

ຖ້າສານປະຊາຊົນ ຫາກເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລະເມີດກົດໝາຍຕາມທີ່ກຳນົດໄວ້ໃນວັກ ສອງ ຂອງມາດຕານີ້, ສານປະຊາຊົນ ກໍຈະບໍ່ລົງຄຳຊີ້ຂາດຢັ້ງຢືນເອົາ. ຄູ່ກໍລະນີ ມີສິດຕົກລົງໃຫ້ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 63 ການຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ**

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໂດຍໄດ້ຮັບການຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ.

ສານປະຊາຊົນ ຂອງ ສປປ ລາວ ຈະພິຈາລະນາຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຄູ່ກໍລະນີ ຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ;

2. ບໍ່ຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;

3. ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ.

ພາຍຫຼັງ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ຖືກຮັບຮູ້ ແລະ ຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ ແລ້ວ ກໍໃຫ້ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍ ວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ.

## ພາກທີ VI
## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 64 ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄ່າທຳນຽມ;
2. ຄ່າບໍລິການ;
3. ຄ່າແຮງງານ.

### ມາດຕາ 65 (ປັບປຸງ) ຄ່າທຳນຽມ

ຄ່າທຳນຽມ ແມ່ນ ພັນທະຂອງຄູ່ກໍລະນີ ທີ່ຕ້ອງມອບເຂົ້າງົບປະມານແຫ່ງລັດ.

<u>ອັດຕາ</u>ການເກັບຄ່າທຳນຽມ ໃຫ້ປະຕິບັດ<u>ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ</u> ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ໃນການໄກ່ເກ່ຍ ໃຫ້ຄູ່ກໍລະນີ ຈ່າຍຄ່າທຳນຽມຝ່າຍລະເຄິ່ງ ກ່ອນການດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ.

ໃນການຕັດສິນນັ້ນ ໃຫ້ຄູ່ກໍລະນີ ຮັບຜິດຊອບຈ່າຍຄ່າທຳນຽມ ຕາມຄຳຕັດສິນ.

### ມາດຕາ 66 (ປັບປຸງ) ຄ່າບໍລິການ

ຄ່າບໍລິການ ແມ່ນຄ່າຮັບໃຊ້ທາງ<u>ດ້ານວິຊາການໃນການດຳເນີນການ</u>ໄກ່ເກ່ຍ ຫຼື ການຕັດສິນ <u>ທີ່ເກັບຈາກຄູ່ກໍລະນີ ເພື່ອເປັນການຍູ້ໜູນການໃຊ້ຈ່າຍງົບປະມານຂອງລັດ</u> ເຊັ່ນ <u>ການ</u>ສົ່ງໝາຍເຊີນ, <u>ການ</u>ສຳເນົາເອກະສານ, <u>ການ</u>ຈັດປະຊຸມ ແລະ ອື່ນໆ.

ການເກັບຄ່າບໍລິການ ໃຫ້ປະຕິບັດ<u>ຕາມລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ</u> ທີ່ປະກາດໃຊ້ໃນແຕ່ລະໄລຍະ <u>ຊຶ່ງ</u>ໃຫ້ຜູ້ຮ້ອງຂໍ ເປັນຜູ້ຮັບຜິດຊອບຈ່າຍກ່ອນ ໃນເວລາຍື່ນຄຳຮ້ອງ.

**ມາດຕາ 67 (ປັບປຸງ) ຄ່າແຮງງານ**

ຄ່າແຮງງານ ແມ່ນ ຄ່າໃຊ້ຈ່າຍກ່ຽວກັບການເຄື່ອນໄຫວວຽກງານ ຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຄ່າໃຊ້ຈ່າຍໃຫ້ຜູ້ຊ່ຽວຊານ ແລະ ຄ່າໃຊ້ຈ່າຍອື່ນ ທີ່ຈຳເປັນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງນັ້ນ.

ຄ່າແຮງງານ ແມ່ນ ຄູ່ກໍລະນີເປັນຜູ້ຕົກລົງກັບຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ແລ້ວແຈ້ງໃຫ້ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນຮ້ອງຂໍໃຫ້ແກ້ໄຂຂໍ້ຂັດແຍ່ງນັ້ນ.

ຄ່າແຮງງານຂອງຜູ້ຊ່ຽວຊານ ໃຫ້ປະຕິບັດຕາມການຕົກລົງຂອງຄູ່ກໍລະນີ ກັບຜູ້ຊ່ຽວຊານ ຫຼື ຕາມການຕົກລົງຂອງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 68 ຂໍ້ຫ້າມສຳລັບພະນັກງານ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ຫ້າມ ພະນັກງານ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂອງຂໍ້ຂັດແຍ່ງ ທີ່ຕົນໄດ້ຮູ້ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ;
2. ນຳໃຊ້ຂໍ້ມູນ ທີ່ຕົນໄດ້ຮູ້ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ເພື່ອທຳລາຍສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
3. ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ;
4. ຮັບ, ທວງເອົາເງິນ ຫຼື ຜົນປະໂຫຍດອື່ນໃດໜຶ່ງຈາກຄູ່ກໍລະນີ;
5. ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ;
6. ລຳອຽງ ໃນການປະຕິບັດໜ້າທີ່;
7. ບັງຄັບ, ນາບຂູ່ ຄູ່ກໍລະນີ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 69 (ປັບປຸງ) ຂໍ້ຫ້າມສຳລັບຄູ່ກໍລະນີ**

ຫ້າມ ຄູ່ກໍລະນີ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫຼື ຂໍ້ມູນກ່ຽວກັບຂໍ້ຂັດແຍ່ງ;
2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ, ຕົວະຍົວະ, ຫຼອກລວງພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ຜູ້ຊ່ຽວຊານ;
3. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ຜູ້ຊ່ຽວຊານ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 70 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ບໍ່ໃຫ້ການຮ່ວມມື, ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ຜູ້ຊ່ຽວຊານ;

2. ຍຸຍົງຜູ້ອື່ນ ບໍ່ໃຫ້ນຳໃຊ້ການແກ້ໄຂຂໍ້ຂັດແຍ່ງຢູ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## ໝວດທີ 1
## ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

### ມາດຕາ 71 ອົງການຄຸ້ມຄອງ

ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ກະຊວງຍຸຕິທຳ;

2. ພະແນກຍຸຕິທຳແຂວງ, ນະຄອນ.

### ມາດຕາ 72 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;

2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງຂອງສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທົ່ວປະເທດ;

5. ກໍ່ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ ຄວາມສາມາດ, ຈັນຍາບັນ ແລະ ວິຊາສະເພາະໃຫ້ພະນັກງານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ;

6. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

7. ແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

8. ມີຄຳເຫັນ ກ່ຽວກັບການແຕ່ງຕັ້ງ ຫົວໜ້າ ແລະ ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

9. ແຕ່ງຕັ້ງ ຫຼື ປົດ ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ເຂົ້າໃນ ຫຼື ອອກຈາກປຶ້ມບັນຊີລາຍຊື່ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຕາມການສະເໜີ ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

10. ອະນຸຍາດການເຂົ້າມາເຄື່ອນໄຫວຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດຢູ່ ສປປ ລາວ;

11. ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

12. ຮ່ວມມືກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

13. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ລັດຖະບານຢ່າງປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ ແລະ ງົບປະມານ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ສະເໜີກະຊວງຍຸຕິທຳ ມີຄວາມເຫັນກ່ຽວກັບ ການສ້າງຕັ້ງ ແລະ ປັບປຸງຫ້ອງການ, ການແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍຫົວໜ້າ, ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

6. ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບ ການເຄື່ອນໄຫວວຽກງານຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ ຫຼື ພະນັກງານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

7. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕໍ່ກະຊວງຍຸຕິທຳ ແລະ ອົງການປົກຄອງແຂວງ, ນະຄອນຫຼວງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 74 ອົງການກວດກາ**

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສອງ ປະເພດ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັບອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

**ມາດຕາ 75 (ປັບປຸງ) ເນື້ອໃນການກວດກາ**

ເນື້ອໃນຕົ້ນຕໍຂອງການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;

3. ການເຄື່ອນໄຫວ ຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຄຸ້ມຄອງ ແລະ ການນຳໃຊ້ ລາຍຮັບ-ລາຍຈ່າຍ ຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານຢູ່ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ.

**ມາດຕາ 76 ຮູບການການກວດກາ**

ການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດຳເນີນດ້ວຍຮູບການ ຕາມລະບົບປົກກະຕິ, ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ.

ການກວດກາ ຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອຕໍ່ປີ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນ ການກວດການອກແຜນການ ເມື່ອຫາກເຫັນວ່າມີຄວາມຈຳເປັນ ແຕ່ການລົງກວດການັ້ນ ແມ່ນດຳເນີນຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

ໃນການກວດການັ້ນ ໃຫ້ດຳເນີນທັງການກວດກາເອກະສານ ແລະ ລົງກວດກາຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

## ພາກທີ IX
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 77 ງົບປະມານ**

ງົບປະມານ ໃນການເຄື່ອນໄຫວວຽກງານຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນອີງໃສ່ງົບປະມານຂອງລັດ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ງົບປະມານຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂຶ້ນກັບກະຊວງຍຸຕິທຳ;

2. ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຂຶ້ນກັບພະແນກຍຸຕິທຳແຂວງ, ນະຄອນຫຼວງ ທີ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕັ້ງຢູ່.

**ມາດຕາ 78 ເຄື່ອງໝາຍ**

ເຄື່ອງໝາຍຂອງ ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຮູບກາຊິງຊັ່ງຢູ່ໃນຮູບວົງມົນ ແລະ ມີຕົວໜັງສື ຂຽນວ່າ: " ສກສ " ຫຼື " ຫກສ " ຢູ່ພື້ນຊິງຊັ່ງ.

**ມາດຕາ 79 ຕາປະທັບ**

ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 80 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການໄກ່ເກ່ຍ, ການຕັດສິນທີ່ມີປະສິດທິພາບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 81 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂໍ້ຂັດແຍ່ງ ໂດຍບໍ່ໄດ້ຮັບອະນຸຍາດ, ໃຫ້ ຫຼື ຮັບສິນບົນ, ສວຍໃຊ້ໜ້າທີ່ ຫຼື ມີການກະທຳໃດໜຶ່ງ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ລັດ, ສັງຄົມ ຫຼື ບຸກຄົນອື່ນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ຖືກດຳເນີນຄະດີ ຕາມກົດໝາຍ ຕາມກໍລະນີເບົາ ຫຼື ໜັກ ແລະ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ສຳລັບຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ນອກຈາກມາດຕະການຕາມທີ່ກຳນົດໄວ້ໃນວັກ ໜຶ່ງ ຂອງມາດຕານີ້ ຍັງຈະຖືກປົດອອກຈາກການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕາມແຕ່ລະກໍລະນີ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 82 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 83 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສປປ ລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 06/ສພຊ, ລົງວັນທີ 17 ທັນວາ 2010.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ,**

# ສາລະບານ


ຮ່າງ ກົດໝາຍ ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັງປຸງ)........................1

ພາກທີ I ບົດບັນຍັດທົ່ວໄປ........................1

ມາດຕາ 1 ຈຸດປະສົງ........................1

ມາດຕາ 2 ຂໍ້ຂັດແຍ່ງ ແລະ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................1

ມາດຕາ 3 (ປັບປຸງ) ການອະທິບາຍຄາສັບ........................1

ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................2

ມາດຕາ 5 ສິດໃນການເລືອກການແກ້ໄຂຂໍ້ຂັດແຍ່ງ........................2

ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ........................2

ມາດຕາ 7 ການຮ່ວມມືສາກົນ........................3

ພາກທີ II ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................3

ໝວດທີ 1 ຫຼັກການ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................3

ມາດຕາ 8 ຫຼັກການພື້ນຖານຂອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ........................3

ມາດຕາ 9 ການຮັບປະກັນຄວາມຍຸຕິທຳ ແລະ ຄວາມສອດຄ່ອງກັບກົດໝາຍ........................3

ມາດຕາ 10 ຄວາມສະໝັກໃຈຂອງຄູ່ກໍລະນີ........................3

ມາດຕາ 11 ຄວາມສະເໝີພາບຂອງຄູ່ກໍລະນີ........................3

ມາດຕາ 12 ຄວາມເປັນເອກະລາດ ແລະ ທ່ຽງທຳ ຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ........................4

ມາດຕາ 13 ພາສາທີ່ນຳໃຊ້........................4

ມາດຕາ 14 ການຮັບປະກັນຄວາມລັບ........................4

ໝວດທີ 2 ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................4

ມາດຕາ 15 ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................4

ມາດຕາ 16 (ປັບປຸງ) ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນາມາພິຈາລະນາ........................4

ໝວດທີ 3 ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ........................5

ມາດຕາ 17 ການຍື່ນຄຳຮ້ອງຂໍ........................5

ມາດຕາ 18 ການປະກອບເອກະສານ........................5

ມາດຕາ 19 ເນື້ອໃນຄຳຮ້ອງຂໍ........................5

ມາດຕາ 20 (ປັບປຸງ) ການພິຈາລະນາຄຳຮ້ອງຂໍ........................5

ມາດຕາ 21 (ໃໝ່) ການສິ່ງໝາຍເຊີນ........................6

ມາດຕາ 22 ການເລືອກຮູບການແກ້ໄຂ........................6

ມາດຕາ 23 (ໃໝ່) ຜູ້ຊ່ຽວຊານ........................6

ໝວດທີ 4 ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ........................6

ມາດຕາ 24 ການໄກ່ເກ່ຍ ..... 6
ມາດຕາ 25 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກ່ຍ ..... 7
ມາດຕາ 26 (ປັບປຸງ) ການຖອນຕົວ ຫຼື ການຄ້ານຕົວຜູ້ໄກ່ເກ່ຍ ..... 7
ມາດຕາ 27 (ປັບປຸງ) ການດຳເນີນການໄກ່ເກ່ຍ ..... 8
ມາດຕາ 28 (ໃໝ່) ການເລື່ອນການໄກ່ເກ່ຍ ..... 8
ມາດຕາ 29 (ໃໝ່) ການໂຈະການໄກ່ເກ່ຍ ..... 8
ມາດຕາ 30 (ປັບປຸງ) ການສິ້ນສຸດການໄກ່ເກ່ຍ ..... 9
ມາດຕາ 31 ບົດບັນທຶກຂອງການໄກ່ເກ່ຍ ..... 9
ມາດຕາ 32 (ປັບປຸງ) ການປ່ຽນຮູບການແກ້ໄຂ ..... 9
ໝວດທີ 5 ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ ..... 10
ມາດຕາ 33 (ປັບປຸງ) ການຕັດສິນ ..... 10
ມາດຕາ 34 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ຕັດສິນ ..... 10
ມາດຕາ 35 (ປັບປຸງ) ການຖອນຕົວ ຫຼື ການຄ້ານຕົວຜູ້ຕັດສິນ ..... 10
ມາດຕາ 36 (ປັບປຸງ) ການົດເວລາດຳເນີນການຕັດສິນ ..... 10
ມາດຕາ 37 (ປັບປຸງ) ການສະເໜີຂໍ້ມູນ, ຫຼັກຖານ ..... 10
ມາດຕາ 38 (ໃໝ່) ການໂຈະການົດເວລາການດາເນີນການຕັດສິນ ..... 11
ມາດຕາ 39 (ໃໝ່) ການສອບຖາມ ແລະ ການໂຕ້ແຍ່ງ ..... 11
ມາດຕາ 40 (ປັບປຸງ) ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ ..... 11
ມາດຕາ 41 (ປັບປຸງ) ສິດໃນການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ..... 11
ມາດຕາ 42 (ປັບປຸງ) ຄໍາຕັດສິນຂອງຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ..... 12
ມາດຕາ 43 (ໃໝ່) ການເລື່ອນການອ່ານຄໍາຕັດສິນ ..... 12
ມາດຕາ 44 (ປັບປຸງ) ເນື້ອໃນຄໍາຕັດສິນ ..... 12
ມາດຕາ 45 (ໃໝ່) ການດັດແກ້ຄໍາຕັດສິນ ແລະ ການຕັດສິນເພີ່ມເຕີມ ..... 13
ມາດຕາ 46 (ປັບປຸງ) ການຄັດຄ້ານຄໍາຕັດສິນ ..... 13
**ພາກທີ III ສູນ ແລະ ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ..... 13**
ມາດຕາ 47 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ..... 13
ມາດຕາ 48 ໂຄງປະກອບການຈັດຕັ້ງຂອງອົງການແກ້ໄຂຂໍ້ຂັດແຍ່ງ ..... 13
ມາດຕາ 49 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ..... 14
ມາດຕາ 50 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ..... 14
**ພາກທີ IV ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ..... 15**
ມາດຕາ 51 (ປັບປຸງ) ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ..... 15
ມາດຕາ 52 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ..... 15

ມາດຕາ 53 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ສຳລັບຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ....... 15
ມາດຕາ 54 (ປັບປຸງ) ປຶ້ມບັນຊີລາຍຊື່ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ....... 15
ມາດຕາ 55 (ໃໝ່) ການສິ້ນສຸດການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ....... 16
ມາດຕາ 56 (ໃໝ່) ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ....... 16
ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ....... 16
**ພາກທີ V ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 16**
ມາດຕາ 58 (ປັບປຸງ) ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 16
ມາດຕາ 59 (ໃໝ່) ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ....... 17
ມາດຕາ 60 (ປັບປຸງ) ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ ....... 17
ມາດຕາ 61 (ປັບປຸງ) ການຈັດຕັ້ງປະຕິບັດໂດຍອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ....... 17
ມາດຕາ 62 (ປັບປຸງ) ການຊີ້ຂາດຂອງສານປະຊາຊົນ ....... 17
ມາດຕາ 63 ການຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ....... 17
**ພາກທີ VI ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 18**
ມາດຕາ 64 ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 18
ມາດຕາ 65 (ປັບປຸງ) ຄ່າທຳນຽມ ....... 18
ມາດຕາ 66 (ປັບປຸງ) ຄ່າບໍລິການ ....... 18
ມາດຕາ 67 (ປັບປຸງ) ຄ່າແຮງງານ ....... 19
**ພາກທີ VII ຂໍ້ຫ້າມ ....... 19**
ມາດຕາ 68 ຂໍ້ຫ້າມສຳລັບພະນັກງານ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ....... 19
ມາດຕາ 69 (ປັບປຸງ) ຂໍ້ຫ້າມສຳລັບຄູ່ກໍລະນີ ....... 19
ມາດຕາ 70 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ....... 19
**ພາກທີ VIII ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 20**
ໝວດທີ 1 ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 20
ມາດຕາ 71 ອົງການຄຸ້ມຄອງ ....... 20
ມາດຕາ 72 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ ....... 20
ມາດຕາ 73 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ....... 21
ໝວດທີ 2 ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ....... 21
ມາດຕາ 74 ອົງການກວດກາ ....... 21
ມາດຕາ 75 (ປັບປຸງ) ເນື້ອໃນການກວດກາ ....... 22
ມາດຕາ 76 ຮູບການການກວດກາ ....... 22
**ພາກທີ IX ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ ....... 22**

ມາດຕາ 77 ງົບປະມານ ........ 22
ມາດຕາ 78 ເຄື່ອງໝາຍ ........ 22
ມາດຕາ 79 ຕາປະທັບ ........ 23
**ພາກທີ X ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ........ 23**
ມາດຕາ 80 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ ........ 23
ມາດຕາ 81 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ ........ 23
**ພາກທີ XI ບົດບັນຍັດສຸດທ້າຍ ........ 23**
ມາດຕາ 82 ການຈັດຕັ້ງປະຕິບັດ ........ 23
ມາດຕາ 83 (ປັບປຸງ) ຜົນສັກສິດ ........ 23